ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1031 /ອຄ.ກຂອ

ນະຄອນຫລວງວຽງຈັນ, ວັນທີ 25 MAY 2010

## ບົດແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດດຳລັດ ວ່າດ້ວຍແຫລ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍແຫລ່ງກຳເນີດຂອງສິນຄ້ານຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22/04/2010.
- ອີງຕາມການສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກບົດແນະນຳກ່ຽວກັບ ການຈັດຕັ້ງປະຕິບັດ ດັ່ງນີ້:**

### I. ຈຸດປະສົງ

ບົດແນະນຳສະບັບນີ້ ວາງອອກເພື່ອເຮັດໃຫ້ການຈັດຕັ້ງປະຕິບັດດຳລັດສະບັບເລກທີ 228/ນຍ, ລົງວັນທີ 22/04/2010 ວ່າດ້ວຍແຫລ່ງກຳເນີດສິນຄ້ານຳເຂົ້າ ແລະສົ່ງອອກ ໃຫ້ປະກົດຜົນເປັນຈິງ ແລະ ເປັນເອກະພາບທົ່ວປະເທດ.

### II. ເນື້ອໃນ

ເນື້ອໃນຂອງບົດແນະນຳສະບັບນີ້ ກວມເອົາລະບຽບແຫລ່ງກຳເນີດສິນຄ້າທີ່ບໍ່ໄດ້ສິດພິເສດ ແລະ ລະບຽບແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດ.

**1). ລະບຽບແຫລ່ງກຳເນີດສິນຄ້າທີ່ບໍ່ໄດ້ສິດພິເສດ**

(ກ) ລະບຽບແຫລ່ງກຳເນີດສິນຄ້າທີ່ບໍ່ໄດ້ສິດພິເສດ ຖືກນຳໃຊ້ເພື່ອ:

- ກຳນົດສິນຄ້ານຳເຂົ້າ ທີ່ຈະໄດ້ຮັບການປະຕິບັດຫລັກການຊາດທີ່ໄດ້ຮັບອະນຸເຄາະຫລາຍທີ່ສຸດ;

- ປະຕິບັດບັນດາມາດຕະການ ແລະ ເຄື່ອງມືທາງດ້ານນະໂຍບາຍການຄ້າ ເຊັ່ນ: ມາດຕະການ ຕອບໂຕ້ການທຸ່ມຕະຫລາດ ແລະ ມາດຕະການປົກປ້ອງຜູ້ຜະລິດພາຍໃນ;

- ເກັບກຳສະຖິຕິທາງດ້ານການຄ້າ; ແລະ

- ການຈັດຊື້ຂອງລັດຖະບານ.

(ຂ) ບົດແນະນຳສະບັບນີ້ ໄດ້ອີງໃສ່ຫລັກການຕໍ່ໄປນີ້ ເພື່ອກຳນົດແຫລ່ງກຳເນີດຂອງສິນຄ້າ:

**- ສິນຄ້າທີ່ໄດ້ມາ ຫລື ຜະລິດຂຶ້ນໂດຍໃຊ້ວັດຖຸດິບພາຍໃນປະເທດທັງໝົດ:** ລວມມີສັດທີ່ມີຊີວິດ ທີ່ເກີດ ແລະ ລ້ຽງໃນປະເທດນັ້ນ, ຜັກ ແລະ ພືດ ທີ່ເກັບກ່ຽວໃນປະເທດນັ້ນ, ສິ່ງເສດເຫລືອ ແລະ ສິ່ງຂອງ ທີ່ໃຊ້ແລ້ວ ຈາກການທຳລາຍ ຫລື ຈາກການຜະລິດໃນປະເທດນັ້ນ; ສິ້ນສ່ວນ, ອາໄຫລ່ ແລະ ວັດຖຸດິບທີ່ ນຳມາໃຊ້ຄືນຈາກສິນຄ້າທີ່ບໍ່ສາມາດນຳໃຊ້ ແລະ ສ້ອມແປງອີກແລ້ວ ແລະ ສິນຄ້າທີ່ ໄດ້ຈາກພື້ນນ້ຳ ແລະ ພື້ນທະເລນອກເຂດນ່ານນ້ຳ ຂອງປະເທດຜູ້ສົ່ງອອກ ຖ້າວ່າປະເທດນັ້ນຫາກມີສິດໃຊ້ປະໂຫຍດຈາກ ພື້ນ ນ້ຳ ແລະ ພື້ນທະເລນັ້ນ.

**- ການປຸ່ງແປງຢ່າງຫລວງຫລາຍຂອງສິນຄ້າ:** ໝາຍເຖິງ ສິນຄ້າສຳເລັດຮູບທີ່ຜະລິດຂຶ້ນທີ່ມີການ ປຸ່ງແປງລະຫັດສິນຄ້າໃນລະດັບ 4 ຕົວເລກທີ່ແຕກຕ່າງກັບລະຫັດສິນຄ້າຂອງວັດຖຸດິບນຳເຂົ້າທີ່ໃຊ້ໃນ ການຜະລິດສິນຄ້ານັ້ນ. ໃນກໍລະນີ ທີ່ສິນຄ້າໄດ້ຜ່ານຂະບວນການຜະລິດຢູ່ຫລາຍປະເທດ, ປະເທດທີ່ດຳ ເນີນການປຸ່ງແປງຢ່າງຫລວງຫລາຍຂອງສິນຄ້າເທື່ອສຸດທ້າຍ ໃຫ້ຖືເປັນປະເທດແຫລ່ງກຳເນີດຂອງສິນ ຄ້ານັ້ນ.

(ຄ) ສິນຄ້າທີ່ມີການປຸ່ງແປງພຽງເລັກນ້ອຍຕາມ ມາດຕາທີ 8 ຂອງດຳລັດສະບັບເລກທີ 228/ນຍ, ລົງວັນທີ 22/04/2010 ຈະບໍ່ຖືວ່າເປັນສິນຄ້າທີ່ໄດ້ແຫລ່ງກຳເນີດ.

(ງ) ປັດໃຈທີ່ບໍ່ມີຜົນກະທົບຕໍ່ກັບແຫລ່ງກຳເນີດສິນຄ້າ. ມາດຕາ 9 ແລະ ມາດຕາ 10 ຂອງດຳລັດ ສະບັບເລກທີ 228/ນຍ, ລົງວັນທີ 22/04/2010 ໄດ້ກຳນົດບັນດາປັດໃຈທີ່ບໍ່ມີຜົນກະທົບຕໍ່ກັບການກຳນົດ ແຫລ່ງກຳເນີດຂອງສິນຄ້າ ເຊັ່ນ: ການຫຸ້ມຫໍ່ສິນຄ້າ, ເຄື່ອງອຸປະກອນ, ເອກະສານຄູ່ມືການນຳໃຊ້, ພະລັງ ງານທີ່ໃຊ້ເຂົ້າໃນການຜະລິດສິນ ຄ້າ, ໂຮງງານ, ເຄື່ອງຈັກ, ແລະ ເຄື່ອງມືທີ່ໃຊ້ໃນການຜະລິດສິນຄ້າ...

**2). ລະບຽບແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດ**

ສປປ ລາວ ຈະນຳໃຊ້ລະບຽບແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດ ຕໍ່ກັບສິນຄ້າຂອງປະເທດ ແລະ ກຸ່ມປະເທດ ພາຍໃຕ້ສັນຍາການຄ້າ ທີ່ ສປປ ລາວ ເປັນພາຄີ (ດັ່ງທີ່ໄດ້ກຳນົດໃນມາດຕາທີ 5 ຂອງ ດຳລັດ ສະບັບເລກທີ 228/ນຍ, ລົງວັນທີ 22/04/2010).

ປະເທດ ແລະ ກຸ່ມປະເທດຕ່າງໆ ຕໍ່ໄປນີ້ ມີສິດທີ່ຈະໄດ້ສິດພິເສດໃນການຍົກເວັ້ນ ຫລື ຫລຸດຜ່ອນ ອັດຕາພາສີນຳເຂົ້າ ຈາກ ສປປ ລາວ ຖ້າວ່າສິນຄ້າທີ່ນຳເຂົ້າຈາກປະເທດ ຫລື ກຸ່ມປະເທດເຫລົ່ານັ້ນ ຫາກໄດ້ເງື່ອນໄຂຕາມລະບຽບແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດ ດັ່ງນີ້:

1. ລະບົບການຫລຸດອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນ ຂອງເຂດການຄ້າເສລີອາຊຽນ
2. ເຂດການຄ້າເສລີອາຊຽນ-ຈີນ
3. ເຂດການຄ້າເສລີອາຊຽນ-ຍີ່ປຸ່ນ
4. ເຂດການຄ້າເສລີອາຊຽນ-ອິນເດຍ
5. ເຂດການຄ້າເສລີອາຊຽນ-ອົດສະຕາລີ-ນິວຊີແລນ
6. ເຂດການຄ້າເສລີອາຊຽນ-ເກົາຫລີ
7. ສັນຍາການຄ້າລາວ-ຫວຽດ

## III. ໃບຢັ້ງຢືນແຫລ່ງກຳເນີດສິນຄ້າ

ໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ມີ ສອງຮູບແບບ ຄື: ໃບຢັ້ງຢືນແຫລ່ງກຳເນີດສິນຄ້າແບບທຳມະດາ ແລະ ໃບຢັ້ງຢືນແຫລ່ງກຳເນີດສິນຄ້າແບບໄດ້ສິດພິເສດທາງດ້ານການຄ້າ.

**(ກ) ໃບຢັ້ງຢືນແຫລ່ງກຳເນີດສິນຄ້າແບບທຳມະດາ:** ແມ່ນເອກະສານໜຶ່ງ ທີ່ໃຊ້ເພື່ອເຮັດໃຫ້ຜູ້ຊື້ໝັ້ນໃຈວ່າສິນຄ້າທີ່ສົ່ງອອກ ແມ່ນສິນຄ້າທີ່ໄດ້ມາທັງໝົດ, ຜະລິດ ຫລື ປຸງແຕ່ງຂຶ້ນຢູ່ໃນ ສປປ ລາວ.

**(ຂ) ໃບຢັ້ງຢືນແຫລ່ງກຳເນີດສິນຄ້າແບບໄດ້ສິດພິເສດທາງດ້ານການຄ້າ:** ແມ່ນເອກະສານໜຶ່ງ ທີ່ຊ່ວຍປັບປຸງຄວາມໄດ້ປຽບໃນການແຂ່ງຂັນຂອງການສົ່ງອອກສິນຄ້າໃຫ້ດີຂຶ້ນ ໂດຍຜູ້ຊື້ມີສິດທີ່ຈະໄດ້ຮັບການຍົກເວັ້ນ ຫລື ການຫລຸດຜ່ອນອັດຕາພາສີ ຈາກການນຳເຂົ້າສິນຄ້າ ພາຍໃຕ້ໂຄງການໃຫ້ສິດພິເສດທາງການຄ້າແບບຝ່າຍດຽວ ຫລື ສັນຍາການຄ້າເສລີ. ໃບຢັ້ງຢືນແຫລ່ງກຳເນີດສິນຄ້າແບບໄດ້ສິດພິເສດທາງການຄ້າຖືກແບ່ງອອກເປັນປະເພດຕ່າງໆ ດັ່ງນີ້:

1) **ໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ຟອມ A:** ແມ່ນອອກໃຫ້ແກ່ສິນຄ້າທີ່ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີນຳເຂົ້າ ພາຍໃຕ້ໂຄງການໄດ້ຮັບສິດພິເສດຝ່າຍດຽວ ທີ່ໃຫ້ໂດຍບັນດາປະເທດ ຫລື ກຸ່ມປະເທດຕ່າງໆ ຕົວຢ່າງ: ສະຫະພາບເອີຣົບ, ສະວິດເຊີແລນ, ຍີ່ປຸ່ນ, ນໍເວ ແລະ ອື່ນໆ.

2) **ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ CO Korea:** ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນອັດຕາພາສີນຳເຂົ້າຈາກ ສ.ເກົາຫລີ ພາຍໃຕ້ລະບົບສິດພິເສດທາງດ້ານການຄ້າ ທີ່ ສ.ເກົາຫລີ ໃຫ້ແກ່ບັນດາປະເທດດ້ອຍພັດທະນາ.

3) **ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ DFTP:** ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນອັດຕາພາສີນຳເຂົ້າຈາກອິນເດຍ ພາຍໃຕ້ລະບົບສິດພິເສດທາງດ້ານການຄ້າ ທີ່ອິນເດຍໃຫ້ແກ່ບັນດາປະເທດດ້ອຍພັດທະນາ.

4) **ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ D (CEPT/ATIGA):** ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີນຳເຂົ້າ ພາຍໃຕ້ລະບົບການຫລຸດຜ່ອນອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນ (ຫຼື ສັນຍາການຄ້າດ້ານສິນຄ້າຂອງອາຊຽນ) ສຳລັບບັນດາປະເທດສະມາຊິກອາຊຽນ.

5) **ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ** E: ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີນຳເຂົ້າ ພາຍໃຕ້ເຂດການຄ້າເສລີອາຊຽນ-ຈີນ.

6) **ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ** APTA: ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີນຳເຂົ້າ ພາຍໃຕ້ສັນຍາການຄ້າອາຊີ - ປາຊີຟິກ.

7) **ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ** AK: ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີນຳເຂົ້າ ພາຍໃຕ້ເຂດການຄ້າເສລີອາຊຽນ-ເກົາຫລີ.

8) **ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ** AJ: ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີນຳເຂົ້າ ພາຍໃຕ້ເຂດການຄ້າເສລີອາຊຽນ-ຍີ່ປຸ່ນ.

9) **ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ** AI: ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີນຳເຂົ້າ ພາຍໃຕ້ເຂດການຄ້າເສລີອາຊຽນ-ອິນເດຍ.

10)**ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ** SPT:ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີນຳເຂົ້າຈາກ ສປ.ຈີນ ພາຍໃຕ້ໂຄງການສ້າງຜົນເກັບກ່ຽວເບື້ອງຕົ້ນ.

11)**ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ** AANZ: ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີນຳເຂົ້າ ພາຍໃຕ້ເຂດການຄ້າເສລີອາຊຽນ -ອົດສະຕາລີ-ນິວຊີແລນ.

12)**ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ** AISP: ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີນຳເຂົ້າພາຍໃຕ້ລະບົບສິດພິເສດເພື່ອການເຊື່ອມໂຍງເສດຖະກິດເຂົ້າອາຊຽນ ທີ່ປະເທດສະມາຊິກເກົ່າ ໃຫ້ແກ່ປະເທດສະມາຊິກໃໝ່.

13)**ໃບຢັ້ງຢືນແຫລ່ງກຳເນີດສິນຄ້າຟອມ** S: ແມ່ນອອກໃຫ້ສຳລັບສິນຄ້າ ທີ່ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີນຳເຂົ້າ ພາຍໃຕ້ສັນຍາກ່ຽວກັບການໃຫ້ບູລິມະສິດພາສີຂາເຂົ້າເຊິ່ງກັນ ແລະ ກັນ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ.

## IV. ອົງການອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ

1. ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພະແນກອຸດສາຫະກຳ ແລະ ການຄ້ານະຄອນຫລວງ ແລະ ແຂວງ ທົ່ວປະເທດ ແມ່ນໜ່ວຍງານຂອງລັດທີ່ມີສິດໃນການອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດທາງດ້ານການຄ້າ.

2. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ສະພາການຄ້າ ແລະ ອຸດສາຫະກຳແຂວງ ທົ່ວປະເທດ ແມ່ນໜ່ວຍງານທີ່ໄດ້ຮັບມອບໝາຍຈາກ ກະຊວງອຸດສາຫະກຳ ແລະການຄ້າ ໃຫ້ເປັນຜູ້ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າແບບທຳມະດາ ຫລື ແບບບໍ່ໄດ້ສິດພິເສດ.

## V. ການຂໍໃບຢັ້ງຢືນແຫລ່ງກຳເນີດສິນຄ້າ

1. ຜູ້ທີ່ຕ້ອງການຂໍ ໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ທີ່ໄດ້ສິດພິເສດທາງດ້ານການຄ້າ ຕ້ອງປະກອບຊຸດເອກະສານທີ່ຄົບຖ້ວນ ແລະຖືກຕ້ອງ ແລ້ວສະເໜີຕໍ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງຢູ່ ກະຊວງອຸດສາຫະກຳ ແລະ ການຄ້າ ຫລື ພະແນກອຸດສາຫະກຳ ແລະການຄ້າແຂວງ ທົ່ວປະເທດ;

2. ຜູ້ທີ່ຕ້ອງການຂໍ ໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ທີ່ບໍ່ໄດ້ສິດພິເສດທາງດ້ານການຄ້າ ຕ້ອງປະກອບຊຸດເອກະສານທີ່ຄົບຖ້ວນ ແລະ ຖືກຕ້ອງ ແລ້ວສະເໜີຕໍ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງຢູ່ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ຫລື ສະພາການຄ້າ ແລະ ອຸດສາຫະກຳແຂວງ.

## VI. ການອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ

ອົງການ ຫລື ໜ່ວຍງານທີ່ກ່ຽວຂ້ອງ ຈະຕ້ອງອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ພາຍໃນຂອບເຂດເວລາ 3 ວັນລັດຖະການ ຫາກຜູ້ນຳເຂົ້າ ແລະສົ່ງອອກປະກອບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຫລື ກໍລະນີມີຄວາມຈຳເປັນໃນການກວດກາຄືນ ຊ້າສຸດບໍ່ໃຫ້ເກີນ 7 ວັນ ລັດຖະການ.

## VII. ການປະຕິເສດອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ

ໜ່ວຍງານອອກໃບຢັ້ງແຫລ່ງກຳເນີດສິນຄ້າ ມີສິດປະຕິເສດບໍ່ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ໃນກໍລະນີດັ່ງລຸ່ມນີ້:

- ຜູ້ສະເໜີຂໍ ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ປະກອບເອກະສານຂໍບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ຕາມທີ່ກຳນົດໄວ້;
- ມີຂໍ້ມູນທີ່ເຊື່ອຖືໄດ້ວ່າສິນຄ້າດັ່ງກ່າວບໍ່ມີແຫລ່ງກຳເນີດຢູ່ ສປປ ລາວ;

ເມື່ອປະຕິເສດບໍ່ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ; ເຈົ້າໜ້າທີ່ອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ສະເໜີຊາບເຖິງເຫດຜົນໃນການປະຕິເສດດັ່ງກ່າວ.

## VIII. ການຈັດຕັ້ງປະຕິບັດ

1. ບົດແນະນຳສະບັບນີ້ ມີຜົນນຳໃຊ້ຈາກມື້ທີ່ດຳລັດ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010 ມີຜົນບັງຄັບໃຊ້.

2. ຖ້າວ່າ ມີບັນຫາເກີດຂຶ້ນກ່ຽວກັບ ການຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ໜ່ວຍງານຂອງລັດ ແລະ ຜູ້ດຳເນີນທຸລະກິດທີ່ກ່ຽວຂ້ອງ ຕ້ອງລາຍງານຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອແກ້ໄຂ ໂດຍທັນທີ.

**ລັດຖະມົນຕີວ່າການ**
**ກະຊວງອຸດສາຫະກຳ ແລະ ການຄ້າ,**

ດຣ. ນາມ ວິຍະເກດ